ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫລວງວຽງຈັນ ໂທລະສັບ: (+856 21)418062 – 6

# ຄຳສັ່ງ
## ສະບັບທີ 5/2022
## ເລື່ອງ ແຜນບໍລິຫານຄວາມສ່ຽງ ປະຈຳປີ 2022

ຕາມລະບຽບປະຕິບັດ ເລື່ອງນະໂຍບາຍ ແລະ ການບໍລິຫານຄວາມສ່ຽງ (Risk Policy and Management) ປີ 2018 ທີ່ກຳນົດໃຫ້ບໍລິສັດ ຕ້ອງທົບທວນແຜນບໍລິຫານຄວາມສ່ຽງ (Risk Management Plan) ຢ່າງໜ້ອຍປີລະ 1 ຄັ້ງ ເພື່ອໃຊ້ເປັນແນວທາງປະຕິບັດສຳລັບຄວບຄຸມລະດັບຄວາມສ່ຽງໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ນັ້ນ ໃນຊ່ວງປີ 2021 ທີ່ຜ່ານການແຜ່ລະບາດຂອງໄວຣັດສາຍພັນໃໝ່ Coronavirus ຫຼື COVID-19 ມີຄວາມຮຸນແຮງຫຼາຍຂຶ້ນ ແລະ ລັດຖະບານກໍ່ໄດ້ອອກມາດຕະການຄວບຄຸມເຂັ້ມງວດກວ່າປີ 2020 ເກີດມີຜົນກະທົບຢ່າງແຜ່ຫຼາຍ ທັງໃນເລື່ອງຄວາມປອດໄພໃນຊີວິດ ລວມເຖິງດ້ານເສດຖະກິດ ແລະ ສົ່ງຜົນກະທົບຕໍ່ຜົນດຳເນີນງານຂອງບໍລິສັດ ທັ້ງນີ້ບໍລິສັດ ໄດ້ມີການ ອອກມາດຕະການຮີບດ່ວນໃນການຮັບມືກັບການແຜ່ລະບາດໂດຍອອກຄຳສັ່ງເພື່ອໃຫ້ປະຕິບັດມາເປັນໄລຍະແລ້ວນັ້ນ ມາເຖິງໃນຊ່ວງຕົ້ນປີ 2022 ສະຖານະການມີແນວໂນ້ມດີຂຶ້ນ ຄົນສ່ວນຫຼາຍປັບໂຕໄດ້ ມີຄວາມເຂົ້າໃຈ ແລະ ຮຽນຮູ້ທີ່ຈະຢູ່ຮ່ວມກັບໂລກລະບາດ ໂດຍຄາດໝາຍວ່າໃນປີນີ້ຈະມີສະຖານະການທີ່ດີຂຶ້ນແບບ New Normal

ດັ່ງນັ້ນ ບໍລິສັດ ໄດ້ຈັດເຮັດແຜນບໍລິຫານຄວາມສ່ຽງ ປະຈຳປີ 2022 ສະບັບລົງວັນທີ 28 ມັງກອນ 2022 ໂດຍນຳປະເດັນຄວາມສ່ຽງຈາກການແຜ່ລະບາດຂອງໄວຣັດສາຍພັນໃໝ່ເຂົ້າມາຮ່ວມພິຈາລະນາ ພ້ອມກັບປະເດັນການປ່ຽນແປງທາງເຕັກໂນໂລຊີທີ່ ຮອງຮັບກັບແນວທາງການປ່ຽນແປງແບບ New Normal ເພື່ອໃຫ້ເກີດປະສິດທິພາບໃນການບໍລິຫານ ບໍລິສັດໄດ້ກຳນົດແນວທາງແຜນບໍລິຫານຄວາມສ່ຽງ ແລະ ແຜນການດຳເນີນທຸລະກິດຢ່າງຕໍ່ເນື່ອງ ຫຼື Business Contingency Plan (BCP) ຕາມເອກະສານແນບທ້າຍຄຳສັ່ງສະບັບນີ້ ສຳລັບເປັນແນວທາງໃຫ້ທຸກໜ່ວຍງານທີ່ກ່ຽວຂ້ອງໃຊ້ອ້າງອີງ ແລະ ປະຕິບັດຕາມ ດັ່ງນີ້:

1. ແຜນບໍລິຫານຄວາມສ່ຽງ (Risk Management Plan) ຕາມຄຳສັ່ງສະບັບນີ້ ເອີ້ນວ່າ ແຜນບໍລິຫານຄວາມສ່ຽງ ປະຈຳປີ 2022 ສະບັບ ວັນທີ 28 ມັງກອນ 2022 ເຊິ່ງຜ່ານຄວາມເຫັນດີຈາກຄະນະກຳມະການບໍລິຫານຄວາມສ່ຽງ ຕາມການປະຊຸມ ຄັ້ງທີ 1/2022 ເມື່ອວັນທີ 28 ມັງກອນ 2022 ແລະ ສະພາບໍລິຫານ ຕາມການປະຊຸມ ຄັ້ງທີ 1/2022 ເມື່ອວັນທີ 18 ກຸມພາ 2022

2. ປະເດັນຄວາມສ່ຽງທີ່ສຳຄັນ ຈາກການປະເມີນໃນຄັ້ງນີ້ ມີ 10 ປະເດັນທີ່ລຽງຕາມລຳດັບຄວາມສ່ຽງສູງ (ມີການເພີ່ມປະເດັນຄວາມສ່ຽງຈາກ 7 ລຳດັບໃນປີກ່ອນ ເປັນ 10 ລຳດັບໃນປີນີ້) ດັ່ງນີ້:
   2.1. ຄວາມສ່ຽງທີ່ທຸລະກິດຈະຢຸດດຳເນີນການ (Operation Stop) - ມີຄວາມສ່ຽງລະດັບ High Risk ເຊິ່ງຫຼຸດລົງຈາກປີກ່ອນທີ່ຈັດຢູ່ລະດັບ Critical Risk (ປີກ່ອນຢູ່ລຳດັບທີ 1)
   2.2. ຄວາມສ່ຽງດ້ານການປ່ຽນແປງເທັກໂນໂລຊີ (Technology changing) - ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້
   2.3. ຄວາມສ່ຽງດ້ານຄວາມບໍ່ແນ່ນອນຊັດເຈນດ້ານນະໂຍບາຍຂອງລັດຖະບານ (Regulation uncertainty) - ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້
   2.4. ຄວາມສ່ຽງດ້ານຜົນຂາດທຶນຈາກຄຸນນະພາບໜີ້ (Credit Loss) – ມີຄວາມສ່ຽງ High Risk ເຊິ່ງຫຼຸດລົງຈາກປີກ່ອນທີ່ຈັດຢູ່ລະດັບ Critical Risk (ປີກ່ອນຢູ່ລຳດັບທີ 5)
   2.5. ຄວາມສ່ຽງດ້ານອັດຕາແລກປ່ຽນເງິນຕາ (Currency Risk) - ມີຄວາມສ່ຽງ High Risk ເຊິ່ງຫຼຸດລົງຈາກປີກ່ອນທີ່ຈັດຢູ່ລະດັບ Critical Risk (ປີກ່ອນຢູ່ລຳດັບທີ 2)
   2.6. ຄວາມສ່ຽງດ້ານຄວາມສາມາດໃນການຊຳລະເງິນກູ້ (Loan Payment Capacity) - ມີຄວາມສ່ຽງ High Risk ເຊິ່ງເປັນຄວາມສ່ຽງໃໝ່ທີ່ຈັດລຳດັບໃນປີນີ້
   2.7. ຄວາມສ່ຽງດ້ານການຂາດບຸກຄະລາກອນທີ່ສຳຄັນ (Lack of Potential Staff) - ມີຄວາມສ່ຽງ High Risk ເຊິ່ງຫຼຸດລົງຈາກປີກ່ອນທີ່ຈັດຢູ່ລະດັບ Critical Risk (ປີກ່ອນຢູ່ລຳດັບທີ 4)
   2.8. ຄວາມສ່ຽງດ້ານການເພີ່ມຂຶ້ນຂອງຄ່າສຳຮອງໜີ້ ອັນເນື່ອງມາຈາກມາດຕະຖານບັນຊີ IFRS (Increasing of bad debt provision due to IFRS) – ມີຄວາມສ່ຽງ High Risk ເຊິ່ງຫຼຸດລົງຈາກປີກ່ອນທີ່ຈັດຢູ່ລະດັບ Critical Risk (ປີກ່ອນຢູ່ລຳດັບທີ 3)
   2.9. ຄວາມສ່ຽງດ້ານສະພາວະວິກິດເສດຖະກິດຂອງປະເທດລາວ (Lao Economic crisis) – ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ລຳດັບທີ 6)
   2.10. ຄວາມສ່ຽງດ້ານຄວາມເສຍຫາຍ ຫຼື ການຫຼຸດລົງຂອງມູນຄ່າຊັບສິນ (Devalue of Asset) – ມີຄວາມສ່ຽງ High Risk ເຊິ່ງເທົ່າກັນກັບປີກ່ອນ (ປີກ່ອນຢູ່ລຳດັບທີ 7)
3. ແຜນການດຳເນີນທຸລະກິດຢ່າງຕໍ່ເນື່ອງ ຫຼື Business Contingency Plan (BCP) ຖືເປັນແນວທາງໃນການດຳເນີນການເພື່ອຮອງຮັບໃນສະຖານະການຕ່າງໆ ອັນເນື່ອງຈາກການແຜ່ລະບາດຂອງໄວຣັດສາຍພັນໃໝ່ ໂດຍບໍລິສັດ ອາດຈະພິຈາລະນາໃຫ້ນຳມາດຕະການອື່ນເພີ່ມເຕີມ ຫຼື ນຳມາດຕະການໃນສະຖານະການທີ່ຮ້າຍແຮງກວ່າມາໃຊ້ກ່ອນສະຖານະການນັ້ນໆ ກໍໄດ້ຕາມຄວາມເໝາະສົມ

ຄຳສັ່ງສະບັບນີ້ ໃຫ້ມີຜົນບັງຄັບຕັ້ງແຕ່ 07 ພຶດສະພາ 2022 ເປັນຕົ້ນໄປ

ສັ່ງເມື່ອ ວັນທີ 06 ພຶດສະພາ 2022

ຜູ້ອຳນວຍການໃຫຍ່

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານິບ ຕຣີວິດວິໄລ)

**ບໍລິສັດ ມະຫາຊົນ ເຊົ່າສິນເຊື່ອ ມະຫາຊົນ**

**ບົດລາຍງານຄຸ້ມຄອງຄວາມສ່ຽງ ສຳລັບປີ 2022**

**ຂອງວັນທີ 28 ມັງກອນ 2022**

| ບູລິມະສິດຄວາມສ່ຽງ | ບູລິມະສິດຄວາມສ່ຽງ (ປີກ່ອນ) | ແຫຼ່ງຄວາມສ່ຽງ | ການຈັດອັນດັບຄວາມສ່ຽງ (ປີກ່ອນ) | ການຈັດອັນດັບຄວາມສ່ຽງ | ແນວໂນ້ມຄວາມສ່ຽງ |
|---|---|---|---|---|---|
| 1 | 1 | ຢຸດປະຕິບັດງານ | ຄວາມສ່ຽງສູງຂັ້ນວິກິດ | ມີຄວາມສ່ຽງສູງ | ⬇ |
| 2 | | ການປ່ຽນແປງເທັກໂນໂລຊີ | ມີຄວາມສ່ຽງສູງ | ມີຄວາມສ່ຽງສູງ | ໃໝ່ |
| 3 | | ຄວາມບໍ່ແນ່ນອນຊັດເຈນດ້ານນະໂຍບາຍຂອງລັດ | ມີຄວາມສ່ຽງສູງ | ມີຄວາມສ່ຽງສູງ | ໃໝ່ |
| 4 | 5 | ຄວາມສ່ຽງໂອກາດເກີດໜີ້ສູນ | ຄວາມສ່ຽງສູງຂັ້ນວິກິດ | ມີຄວາມສ່ຽງສູງ | ⬇ |
| 5 | 2 | ຄວາມສ່ຽງດ້ານການຜັນຜວນຂອງເງິນຕາຕ່າງປະເທດ | ຄວາມສ່ຽງສູງຂັ້ນວິກິດ | ມີຄວາມສ່ຽງສູງ | ⬇ |
| 6 | | ຄວາມສາມາດໃນການຊຳລະເງິນກູ້ | ມີຄວາມສ່ຽງສູງ | ມີຄວາມສ່ຽງສູງ | ໃໝ່ |
| 7 | 4 | ຂາດພະນັກງານທີ່ມີຄວາມສຳຄັນ (Lack of Potential Staff) | ຄວາມສ່ຽງສູງຂັ້ນວິກິດ | ມີຄວາມສ່ຽງສູງ | ⬇ |
| 8 | 3 | ການເພີ່ມຂຶ້ນຂອງການສະໜອງໜີ້ສິນທີ່ບໍ່ດີເນື່ອງຈາກ IFRS | ຄວາມສ່ຽງສູງຂັ້ນວິກິດ | ມີຄວາມສ່ຽງສູງ | ⬇ |
| 9 | 6 | ຄວາມສ່ຽງວິກິດເສດຖະກິດລາວ | ມີຄວາມສ່ຽງສູງ | ມີຄວາມສ່ຽງສູງ | ↔ |
| 10 | 7 | ຄວາມສ່ຽງກ່ຽວກັບມູນຄ່າຊັບສິນ | ມີຄວາມສ່ຽງສູງ | ມີຄວາມສ່ຽງສູງ | ↔ |

⬆ ຂຶ້ນ

⬇ ລົງ

↔ ບໍ່ມີການປ່ຽນແປງ .